ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 21/ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 17 MAY 2021

## ແຈ້ງການ

ເຖິງ : ທ່ານ ຜູ້ອຳນວຍການ ທະນາຄານທຸລະກິດ ທີ່ສ້າງຕັ້ງ ຢູ່ ສປປ ລາວ.
ເລື່ອງ : ການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບັນດາທະນາຄານທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ ທີ່ມີຈຸດປະສົງເປັນ ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕ້ອງຂໍການຮັບຮອງ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານເພື່ອສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. **ເງື່ອນໄຂການຂໍຮັບຮອງ**
   1) ມີລະບົບສາມາດເຊື່ອມຕໍ່ ກັບບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ;
   2) ມີຄວາມພຽງພໍຂອງທຶນ ຕາມການກຳນົດຂອງລະບຽບການທີ່ ທະນາຄານແຫ່ງ ສປປ ລາວ;
   3) ຮັບປະກັນການໃຫ້ບໍລິການແກ່ຜູ້ລົງທຶນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ ໂດຍສະເພາະ ແມ່ນບຸກຄະລາກອນ, ການບໍລິຫານຄວາມສ່ຽງ ແລະ ອື່ນໆ.

2. ເອກະສານປະກອບການຂໍການຮັບຮອງ
   1) ໃບຄຳຮ້ອງຂໍເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ. ຕາມແບບພິມຂອງ ສຄຄຊ;
   2) ສຳເນົາ ມະຕິກອງປະຊຸມສະພາບໍລິຫານ;
   3) ເອກະສານລາຍງານຄວາມພຽງພໍຂອງທຶນ ປະຈຳປີ;
   4) ຮ່າງ ແລະ ສັນຍາລະຫວ່າງທະນາຄານທຸລະກິດທີ່ມີຈຸດປະສົງຂໍຮັບຮອງເປັນຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ກັບ ບໍລິສັດຫຼັກຊັບ;

5) ເອກະສານຢັ້ງຢືນການເຊື່ອມຕໍ່ ກັບບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການຊຳລະອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ.

**3. ການພິຈາລະນາຂໍການຮັບຮອງ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາກ່ຽວກັບການສະເໜີຂໍການຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ພາຍໃນກຳນົດເວລາ 10 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ. ກໍລະນີປະຕິເສດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນປະຕິເສດ ພາຍໃນ 5 ວັນລັດຖະການ.

**4. ການປະກາດໃຫ້ມວນຊົນຊາບ**

ພາຍຫຼັງໄດ້ຮັບໃບຮັບຮອງ ເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ແລ້ວ ທະນາຄານຕົວແທນເພື່ອການຊຳລະດັ່ງກ່າວ ຕ້ອງປະກາດໃຫ້ມວນຊົນຊາບ ໂດຍຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ 5 ວັນລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບໃບຮັບຮອງເປັນຕົ້ນໄປ.

**5. ຂອບເຂດການໃຫ້ບໍລິການ**

1) ເປີດບັນຊີເງິນ ເພື່ອຊື້ ຂາຍຫຼັກຊັບ ສຳລັບຜູ້ລົງທຶນ;
2) ດຳເນີນທຸລະກຳທາງດ້ານການເງິນ ຕາມສະເໜີຂອງຜູ້ລົງທຶນ;
3) ໃຫ້ບໍລິການອື່ນ ຕາມລະບຽບການກຳນົດ.

**6. ການລາຍງານ**

ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕ້ອງລາຍງານ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີ ບໍ່ສາມາດໃຫ້ບໍລິການ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫົວໜ້າສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ